ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ: 1027 /ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ 25 MAY 2015

**ຄຳແນະນຳ**

**ເຖິງ:** ທ່ານ ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ນະຄອນຫຼວງວຽງຈັນ

**ເລື່ອງ:** ການສົ່ງອອກຜະລິດຕະພັນໄມ້ສຳເລັດຮູບ ທີ່ຊື້ຢູ່ງານວາງສະແດງ

- ອີງຕາມດຳລັດ ວ່າດ້ວຍການນຳເຂົ້າ ແລະ ສົ່ງອອກສິນຄ້າ ສະບັບເລກທີ 114/ລບ, ລົງວັນທີ 06 ເມສາ 2011.
- ອີງຕາມດຳລັດ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 522/ນຍ, ລົງວັນທີ 23 ທັນວາ 2011.
- ອີງຕາມຂໍ້ຕົກລົງ ວ່າດ້ວຍຮູບແບບ ແລະ ຂະໜາດຜະລິດຕະພັນໄມ້ ສະບັບເລກທີ 1415/ອຄ.ກອກ, ລົງວັນທີ 28 ສິງຫາ 2008.
- ອີງຕາມແຈ້ງການ ວ່າດ້ວຍການອອກອະນຸຍາດນຳເຂົ້າ ແລະ ສົ່ງອອກໄມ້ ແລະ ຜະລິດຕະພັນໄມ້ ສະບັບເລກທີ 1904/ອຄ.ກຂອ, ລົງວັນທີ 30/09/2011.

ເພື່ອຫຼຸດຜ່ອນຄວາມຊໍ້າຊ້ອນ ໃນການກວດກາເອກະສານປະກອບ ສຳລັບການສົ່ງອອກຜະລິດຕະພັນໄມ້ສຳເລັດຮູບທີ່ຊື້ຢູ່ງານວາງສະແດງສິນຄ້າ ແນໃສ່ອຳນວຍຄວາມສະດວກ ແກ່ການສົ່ງອອກຜະລິດຕະພັນໄມ້ສຳເລັດຮູບ.

**ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຄຳແນະນຳ ດັ່ງລຸ່ມນີ້:**

ການສົ່ງອອກຜະລິດຕະພັນໄມ້ສຳເລັດຮູບ ທີ່ຊື້ຢູ່ງານວາງສະແດງຕ່າງໆ ທີ່ຈັດຂຶ້ນ ຢູ່ ສປປ ລາວ ໂດຍໄດ້ຮັບອະນຸຍາດຈັດງານວາງສະແດງ ຖືກຕ້ອງຕາມລະບຽບກົດໝາຍ ໃຫ້ປະຕິບັດຕາມເງື່ອນໄຂ ແລະ ຂັ້ນຕອນ ດັ່ງນີ້:

## I. ເງື່ອນໄຂການສົ່ງອອກຜະລິດຕະພັນໄມ້ສຳເລັດຮູບ ທີ່ຊື້ຢູ່ງານວາງສະແດງ

ຜະລິດຕະພັນໄມ້ສຳເລັດຮູບ ທີ່ຊື້ຢູ່ງານວາງສະແດງສິນຄ້າ ເພື່ອສົ່ງອອກໄປຕ່າງປະເທດ ມີເງື່ອນໄຂດັ່ງນີ້:

1. ຜະລິດຕະພັນໄມ້ສຳເລັດຮູບ ຕ້ອງມີຮູບແບບ ແລະ ຂະໜາດທີ່ຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງຂອງ ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 1415/ອຄ.ກຂອ,

ລົງວັນທີ 28 ສິງຫາ 2008 ວ່າດ້ວຍ ຮູບແບບ ແລະ ຂະໜາດຜະລິດຕະພັນໄມ້ ແລະ ກົດໝາຍ, ລະບຽບການອື່ນທີ່ກ່ຽວຂ້ອງ.

2. ຜະລິດຕະພັນໄມ້ ທີ່ນຳມາວາງສະແດງ ຢູ່ງານວາງສະແດງ ຕ້ອງມີແຫຼ່ງທີ່ມາຂອງໄມ້ ແລະ ເສຍພັນທະຢ່າງຖືກຕ້ອງ ແລະ ຕ້ອງຖືກຮັບຮອງຢ່າງເປັນລາຍລັກອັກສອນຈາກຄະນະຮັບຜິດຊອບຈັດງານວາງສະແດງ.
3. ຜະລິດຕະພັນໄມ້ສຳເລັດຮູບ ທີ່ຊື້ຢູ່ງານວາງແດງ ເພື່ອສົ່ງອອກ ຕ້ອງມີມູນຄ່າບໍ່ເກີນ 160.000.0000 ກີບ (ໜຶ່ງຮ້ອຍຫົກສິບລ້ານກີບ) ຕໍ່ໜຶ່ງຜູ້ສົ່ງອອກ (ຫຼື ຕໍ່ຄັ້ງ). ຖ້າຜະລິດຕະພັນໄມ້ສຳເລັດຮູບເປັນຊຸດ ຫາກມີມູນຄ່າເກີນ 160.000.0000 ກີບ (ໜຶ່ງຮ້ອຍຫົກສິບລ້ານກີບ)/ຊຸດ, ການສົ່ງອອກດັ່ງກ່າວແມ່ນບໍ່ເກີນ 1 ຊຸດ.

## II. ການປະກອບເອກະສານ

ການສົ່ງອອກຜະລິດຕະພັນໄມ້ສຳເລັດຮູບ ທີ່ຊື້ຢູ່ງານວາງສະແດງ ຕ້ອງມີເອກະສານປະກອບ ດັ່ງນີ້:

1. ໃບບິນເກັບເງິນ ການຊື້-ຂາຍ ຕົວຈິງ ຊຶ່ງເປັນໃບເກັບເງິນຂອງຂະແໜງອາກອນທີ່ຖືກຕ້ອງຕາມລະບຽບກົດໝາຍ ຂອງ ສປປ ລາວ.
2. ໜັງສືຢັ້ງຢືນ ຂອງຄະນະກຳມະການຈັດງານວາງສະແດງສິນຄ້າ ຊຶ່ງຢັ້ງຢືນຄວາມຖືກຕ້ອງຕາມເງື່ອນໄຂທີ່ໄດ້ກຳນົດໃນໂລແມງ I ຂອງຄຳແນະນຳສະບັບນີ້.

## III. ຂັ້ນຕອນການສົ່ງອອກ

ການສົ່ງອອກຜະລິດຕະພັນໄມ້ສຳເລັດຮູບ ທີ່ຊື້ຢູ່ງານວາງສະແດງສິນຄ້າ ແມ່ນສາມາດສົ່ງອອກໄດ້ເລີຍໂດຍບໍ່ຈຳເປັນຂໍອະນຸຍາດກ່ອນການສົ່ງອອກ ແຕ່ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ພາຍຫຼັງ ໄດ້ຈ່າຍເງິນຄ່າຜະລິດຕະພັນໄມ້ແລ້ວ ຜູ້ມີຈຸດປະສົງສົ່ງອອກສິນຄ້າ ໃຫ້ນຳເອົາໃບບິນເກັບເງິນ ການຊື້-ຂາຍ ໄປສະເໜີຕໍ່ ຄະນະກຳມະການຈັດງານວາງສະແດງສິນຄ້າ ເພື່ອສະເໜີເອົາໜັງສືຢັ້ງຢືນ ຕາມທີ່ກຳນົດໄວ້ໃນ ຂໍ້ 2 ໂລແມງ II ຂອງຄຳແນະນຳສະບັບນີ້ ຕໍ່ຄະນະກຳມະການຈັດງານວາງສະແດງຊຶ່ງປະກອບມີ 3 ຂະແໜງການຫຼັກຄື: ຂະແໜງອຸດສາຫະກຳ ແລະ ການຄ້າ, ຂະແໜງການເງິນ ແລະ ຂະແໜງກະສິກຳ ແລະ ປ່າໄມ້.
2. ແຈ້ງເອກະສານ ຕາມທີ່ກຳນົດໃນໂລແມງ II ຂອງຄຳແນະນຳສະບັບນີ້ ໃຫ້ເຈົ້າໜ້າທີ່ພາສີ ປະຈຳດ່ານບ່ອນສົ່ງອອກ ເພື່ອກວດກາຄວາມຖືກຕ້ອງ ແລະ ດຳເນີນຕາມລະບຽບການ.

## IV. ການຈັດຕັ້ງປະຕິບັດ ແລະ ຜົນສັກສິດ

1. ມອບໃຫ້ກົມການນຳເຂົ້າ ແລະ ສົ່ງອອກ (ກະຊວງອຸດສາຫະກຳ ແລະ ການຄ້າ) ເປັນເຈົ້າການໃນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເປັນຕົ້ນ ກົມພາສີ, ກົມອາກອນ, ກົມຊັບສິນ (ກະຊວງການເງິນ), ກົມກວດກາປ່າໄມ້ (ກະຊວງກະສິກຳ ແລະ ປ່າໄມ້), ກົມຕຳຫຼວດເສດຖະກິດ (ກະຊວງປ້ອງກັນ

ຄວາມສະຫງົບ) ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອໃຫ້ສາມາດຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ຢ່າງມີປະສິດທິຜົນສູງ.

2. ມອບໃຫ້ກົມການນຳເຂົ້າ ແລະ ສົ່ງອອກ ປະສານກັບບັນດາພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ເພື່ອເຜີຍແຜ່ ແລະ ແນະນຳ ການຈັດຕັ້ງປະຕິບັດ ຄຳແນະນຳສະບັບນີ້ ພ້ອມທັງຕິດຕາມຜົນການຈັດຕັ້ງປະຕິບັດ ແລະ ລາຍງານໃຫ້ຄະນະນຳກະຊວງຊາບ. ຖ້າຫາກພົບບັນຫາຂໍ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດ ຕ້ອງລາຍງານຂໍທິດຊີ້ນຳຈາກຄະນະນຳກະຊວງ ເພື່ອຊອກຫາວິທີແກ້ໄຂໃຫ້ທັນເວລາ.

3. ຄຳແນະນຳສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ (15) ວັນ.

**ລັດຖະມົນຕີວ່າການ**

**ກະຊວງອຸດສາຫະກຳ ແລະ ການຄ້າ**

ນ. ເຂັມມະນີ ພົນເສນາ